ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໕໐/ປພຖຊ/໐໔໑໙໐໙**

# ບົດຄວາມ

## ຄວາມບໍ່ຍຸຕິທັມໃນລາວ

ຄວາມບໍ່ຍຸຕິທັມໃນລາວປະຈຸບັນນີ້, ໄດ້ເປັນພັຍຂົ່ມຂູ່ແລະທ້າທາຍ ຕໍ່ການດຳຣົງຊີວິດຂອງປະຊາຊົນລາວຢ່າງໃຫຍ່ຫລວງ. ທັງນີ້, ກໍເພາະສານຍຸຕິທັມ ບໍ່ສາມາດ ທີ່ຈະໃຫ້ຄວາມຍຸຕິທັມແກ່ປະຊາຊົນໄດ້. ເຖິງແມ່ນວ່າ ກົດໝາຍຣັຖທັມມູນ ໄດ້ຣະບຸໄວ້ຢ່າງຈະແຈ້ງ ກ່ຽວກັບການແຍກອຳນາດນິຕິບັນຍັດ, ອຳນາດບໍຣິຫານ ອຳນາດຕຸລາການ ອອກຈາກກັນ ແລະປະຕິບັດວຽກງານ ຂອງໃຜລາວ ຢ່າງເປັນເອກຣາດປານໃດກໍຕາມ... ແຕ່ໃນພາກປະຕິບັດຕົວຈິງແລ້ວ, ກໍແມ່ນຄນະກັມການ ສູນກາງພັກໂທນກຸ່ມດຽວນັ້ນ ເປັນຜູ້ຄວບຄຸມ. ປະຊາຊົນ ຈຶ່ງບໍ່ໄດ້ຮັບຄວາມເປັນທັມ.

ທ່ານ ເກດ ກຽດຕິສັກ, ທັງໆທີ່ເປັນຣັຖມົນຕຣີຊ່ວຍ ວ່າການກະຊວງຍຸຕິທັມ ກໍຍັງອອກມາຍອມຮັບ ໂດຍກ່າວເນັ້ນໜັກ ວ່າ "ປະເທດລາວ ມີກົດໝາຍ ເພື່ອຄວາມຍຸຕິທັມແກ່ປະຊາຊົນຫລາຍສບັບ... ແຕ່ການບັງຄັບໃຊ້ນັ້ນ ບໍ່ໄດ້ຜົນ. ຄວາມບໍ່ຍຸຕິທັມ ໃນສັງຄົມລາວ ນັບວັນ ນັບຮ້າຍແຮງແລະທະວີຄູນຂຶ້ນໄປເລື້ອຍໆ.

ທ່ານ ຍັງຍົກຕົວຢ່າງ ປະຊາຊົນຢູ່ແຂວງ ໄຊຍະບຸຣີ ແລະຜູ້ຍິງອີກຄົນນຶ່ງ ຢູ່ວຽງຈັນ ຖືກເຈົ້າໜ້າທີ່ບັງຄັບ ໃຫ້ຮັບເອົາຄວາມຜິດ ໂດຍທີ່ພວກເຂົາບໍ່ໄດ້ທຳ ແລະເຈົ້າໜ້າທີ່ ກໍບໍ່ມີຫລັກຖານຢືນຢັນຄົບຖ້ວນ, ກໍຍັງຖືກສານຕັດສີນຈຳຄຸກຕລອດຊີວິດ ໃນຂໍ້ຫາຄ້າຢາເສບຕິດ. ມັນບໍ່ພຽງແຕ່ທໍ່ນີ້, ກໍຣະນີອື່ນໆກໍມີຫລາຍ

ເປັນຕົ້ນ...ຄວາມຂັດແຍ້ງ ກ່ຽວກັບທີ່ດິນປູກຝັງ ຂອງປະຊາຊົນ. ຜູ້ໃດມີເງິນໃຫ້ສິນບົນ ແກ່ຄນະຊຸນສານ ຫລືເປັນລູກຫລານ ເສັ້ນສາຍ ຂອງຄນະພັກຣັດ ກໍຊນະຄະດີ, ກາຍເປັນຜູ້ຖືກໄປໝົດ!.

ການອອກມາຍອມຮັບຄວາມເປັນຈິງ ທີ່ເກີດຂື້ນໃນສັງຄົມລາວ ພາຍໃຕ້ການບໍຣິຫານປະເທດຊາດ ແບບຜເດັດການພັກດຽວ ດັ່ງນີ້, ກໍຊີ້ໃຫ້ເຫັນ ວ່າ "ເມືອງລາວໃນປະຈຸບັນ ໄດ້ກ້າວເຂົ້າສູ່ ບັ້ນກາລີຍຸກແລ້ວ". ປະຊາຊົນ ໄດ້ຮັບຄວາມເດືອດຮ້ອນ ໄປທົ່ວທຸກຍ່ອມຫຍ້າ, ບໍ່ໄດ້ຮັບຄວາມຍຸຕິທັມ ໃນການສ້າງສາທຳມາຫາກິນ. ພັກຣັດ ບໍ່ໄດ້ທຳເພື່ອຄວາມຢູ່ດີກິນດີຂອງປະຊາຊົນ; ມີແຕ່ ແອບອ້າງ ເອົາຄວາມ ຍາກຈົນຂອງຊາດ ຂອງປະຊາຊົນມາບັງໜ້າ ເພື່ອຈອບຊໍການຊ່ວຍເຫລືອ ຈາກຕ່າງປະເທດ ເອົາມາແບ່ງປັນກັນ. ສ້າງຮັ່ງຄູນມີໃຫ້ແກ່ຕົນເອງ ແລະພັກພວກ. ໃຊ້ອຳນາດ ໄປໃນທາງບໍ່ຖືກຕ້ອງ.

ປະຊາຊົນລາວ 80% ຢູ່ຕາມຊົນະບົດ ນັບວັນນັບທຸກລົງຊັກໃຊ້, ເຂົ້າຂາດແລງ ແກງຂາດໝໍ້, ມີ ຄວາມທຸກທໍຣະມານຈິດໃຈ ຍ້ອນລູກຫລານບໍ່ໄດ້ເຂົ້າໂຮງຮຽນ, ບໍ່ມີຢາປົວພຍາດ, ແມ່ຍິງຖືພາ ແລະ ເດັກນ້ອຍເກີດໃໝ່ ກໍມີຄວາມສ່ຽງຕໍ່ການຕາຍສູງ...ໂດຍທີ່ພັກຣັດ ບໍ່ໄດ້ໃຫ້ການຊ່ວຍເຫລືອເທົ່າທີ່ຄວນ. ການໄປຫາມາສູ່ ກໍໄດ້ຮັບຄວາມລຳບາກ ຍ້ອນບໍ່ມີຖນົນຫົນທາງເຂົ້າເຖິງກັນແຕ່ລະໝູ່ບ້ານ. ຊີວິດການເປັນຢູ່ ຂອງປະຊາຊົນໃນຊົນະບົດ ກັບຄົນໃນຕົວເມືອງ ມີຄວາມຫລຸດລື່ນ ແຕກຕ່າງກັນຫລາຍທີ່ສຸດ! ໂດຍສະເພາະ ກັບຊາວວຽດນາມ ແລະຊາວຈີນ ທີ່ເຂົ້າມາຊອກຢູ່ຫາກິນ, ທຳທຸຣະກິດ. ພວກເຂົາເລົ່ານັ້ນ, ມີອຳນາດອິດທິພົນ ເໜືອກວ່າຄົນລາວ ຜູ້ກຳອຳນາດ ເປັນເຈົ້າຂອງປະເທດຊາດອີກດ້ວຍ.

ພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ຮຽກຮ້ອງມາຍັງອົງການຈັດຕັ້ງສາກົນ ທີ່ໄດ້ໃຫ້ການຊ່ວຍເຫລືອລາວ ກ່ຽວກັບການປະຕິບັດ ສິດທິເສຣີພາບຂອງປະຊາຊົນ, ຈົ່ງໄດ້ບີບຣັດ ໃຫ້ ພັກຣັດວຽງຈັນ ເຄົາຣົບ ຕໍ່ສິດເສຣີພາບ ຂອງປະຊາຊົນ ຢ່າງຈິງຈັງ ແລະຈິງໃຈ ກ່ອນທີ່ ປະຊາຊົນລາວ ຈະອອກມາຮຽກຮ້ອງ ໃຫ້ພວກເຂົາ ຕ້ອງພົ້ນຈາກອຳນາດໄປ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໙ ເມສາ ໒໐໐໙**